ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທ່ານ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຕ້ອນຮັບ ເອກອັກຄະຣາຊະທູດ ແຫ່ງ ຣາຊະອານາຈັກໄທ ປະຈຳ ສປປ ລາວ

ໃນວັນທີ 21 ມັງກອນ 2025, ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ), ທ່ານ ນ. ຂັນແກ້ວ ຫຼ້າມະນີເງິາ ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະກົມພາຍໃນ ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງ ທ່ານ ນ. ມໍຣະກົດ ສີສະຫວັດ, ເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ ປະຈຳ ສປປ ລາວ ພ້ອມດ້ວຍຄະນະ.



ຈຸດປະສົງໃນການພົບປະໃນຄັ້ງນີ້, ກໍເພື່ອເປັນການອວຍພອນ ແລະ ຢ້ຽມຢາມຖາມຂ່າວ ເນື່ອງໃນໂອກາດປີໃໝ່ສາກົນ ປີ 2025 ພ້ອມທັງປຶກສາຫາລືກ່ຽວກັບແຜນການຮ່ວມມືລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ສະຖານເອກອັກຄະຣາຊະທູດແຫ່ງ ຣາຊະອານາຈັກໄທ ປະຈຳ ສປປ ລາວ ໂດຍສະເພາະແມ່ນການຈັດກິດຈະກຳດ້ານວິຊາການ ທີ່ຕິດພັນກັບວຽກງານຂອງຂະແໜງທະນາຄານ ເປັນຕົ້ນ ການຈັດເວທີເສວະນາກ່ຽວກັບການສົ່ງເສີມການເຂົ້າເຖິງແຫຼ່ງທຶນຂອງ ຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ເພື່ອສະເຫຼີມສະຫຼອງການສ້າງຕັ້ງສາຍພົວພັນທາງການທູດລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ ຄົບຮອບ 75 ປີ ໃນປີ 2025 ນີ້ (19 ທັນວາ 1950 - 19 ທັນວາ 2025).



ໃນໂອກາດນີ້, ທ່ານ ຮອງຜູ້ວ່າການ ທຫລ ໄດ້ຕີລາຄາສູງຕໍ່ການພົວພັນສອງຝ່າຍ ລາວ-ໄທ, ໄທ-ລາວ ຊຶ່ງເປັນການພົວພັນຮ່ວມມືແບບເພື່ອນມິດທີ່ດີຕໍ່ກັນຕະຫຼອດມາ, ມີການແລກປ່ຽນການຢ້ຽມຢາມເຊິ່ງກັນ ແລະ ກັນລະຫວ່າງ ການນຳຂັ້ນສູງຂອງສອງປະເທດ ແລະ ມີການສະໜັບສະໜູນທາງດ້ານຕ່າງໆ ເປັນຕົ້ນດ້ານການຄ້າ, ການບໍລິການ ແລະ ການທະນາຄານ ໃນເວທີພາກພື້ນ ແລະ ສາກົນ. ຊຶ່ງ ທຫລ ຍິນດີສະໜັບສະໜູນ ແລະ ເປັນເຈົ້າພາບຮ່ວມໃນການຈັດກິດຈະກຳດ້ານວິຊາການ ຮ່ວມກັບສະຖານເອກອັກຄະຣາຊະທູດແຫ່ງຣາຊະອານາຈັກໄທ ປະຈຳ ສປປ ລາວ ເພື່ອເຮັດໃຫ້ປີແຫ່ງການສະເຫຼີມສະຫຼອງການສ້າງຕັ້ງສາຍພົວພັນທາງການທູດ ລາວ-ໄທ ຄົບຮົບຮອບ 75 ປີ ເປັນຂະບວນຟົດຟື້ນ. ພ້ອມກັນນີ້, ທ່ານ ຮອງຜູ້ວ່າການ ທຫລ ກໍໄດ້ເນັ້ນໜັກ ແລະ ມີຄວາມເຊື່ອໝັ້ນວ່າ ດ້ວຍການຮ່ວມມືກັນຢ່າງໃກ້ຊິດຂອງສອງຝ່າຍ ພາຍໃຕ້ກົນໄກການຮ່ວມມືທີ່ມີຢູ່, ສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມດັ່ງກ່າວ ຈະໄດ້ຮັບການສືບຕໍ່ເສີມຂະຫຍາຍຍິ່ງໆຂຶ້ນ.

**ຂ່າວ: ພະແນກຮ່ວມມືສອງຝ່າຍ, ກົມຮ່ວມມືສາກົນ**

**ພາບ: ສົມພົດ ທຳມະວົງ**

*ຢູ່ເມືອງລາວໃຊ້ເງິນກີບລາວ*